# ສິນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ

5 ປີ

## ບິດລາຍງານຂໍ້ມູນພື້ນຖານປະຈຳປີ 2020



Australian Aid | ASEAN-Australia Counter Trafficking

ມີນາ 2022

ຜູ້ຂຽນ: ທ່ານ ນາງ ເຄທ ຊັມເນີ (Cate Sumner), ຜູ້ຊ່ຽວຊານອາວຸໂສ, ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT)

ລິຂະສິດທັງໝົດ ແລະ ທຸກສ່ວນຂອງເອກະສານສະບັບນີ້ ເປັນຂອງ ຄາດໂນ້ (Cardno) ແລະ ບໍ່ອະນຸຍາດໃຫ້ ນຳໃຊ້, ຂາຍ, ໂອນ, ສຳເນົາ ຫຼື ຜະລິດຊ້ຳຄືນ ທັງໝົດ ຫຼື ບາງສ່ວນ ໃນລັກສະນະໃດໆ ຫຼື ຜ່ານສື່ໃດໆ ໃຫ້ແກ່ບຸກຄົນໃດໜຶ່ງ ທີ່ນອກ ເໜືອຈາກການຕົກລົງກັບຄາດໂນ້. ເອກະສານສະບັບນີ້ໄດ້ຖືກພິມຂຶ້ນໂດຍຄາດໂນ້ ແຕ່ພຽງຜູ້ດຽວ ເພື່ອຜົນປະໂຫຍດ ແລະ ການນຳໃຊ້ໂດຍຄູ່ຮ່ວມງານ ຕາມຂໍ້ກຳນົດໃນການມີສ່ວນຮ່ວມເທົ່ານັ້ນ. ຄາດໂນ້ ຈະບໍ່ມີພັນທະ ແລະ ຄວາມຮັບຜິດຊອບໃດໆ ຕໍ່ກັບບຸກຄົນທີສາມ ທີ່ນຳໃຊ້ ຫຼື ອ້າງອີງຕໍ່ກັບເນື້ອໃນຂອງເອກະສານສະບັບນີ້.

ຂໍ້ຄວາມປະຕິເສດຄວາມຮັບຜິດຊອບ: ລັດຖະບານອົດສະຕຣາລີ ໄດ້ໃຫ້ທຶນສະໜັບສະໜູນໃນການພິມເຜີຍແຜ່ເອກະສານສະບັບນີ້ ຜ່ານກະຊວງການຕ່າງປະເທດ ແລະ ການຄ້າ. ຄວາມຄິດເຫັນຕ່າງໆທີ່ສະແດງໃນສິ່ງພິມສະບັບນີ້ ແມ່ນເປັນຂອງຜູ້ຂຽນແຕ່ພຽງຜູ້ດຽວ ແລະ ບໍ່ແມ່ນຄວາມຄິດເຫັນຂອງລັດຖະບານອົດສະຕຣາລີ.

# ຄຳນຳ

ໃນປີ 2020 ເປັນປີຄົບຮອບ 5 ປີ ຂອງການລົງນາມສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ສົນທິສັນຍາ).

ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT) ເປັນແຜນງານການຮ່ວມມືໄລຍະ 10 ປີ ຊຶ່ງໄດ້ໃຫ້ທຶນຈາກລັດຖະບານອົດສະຕຣາລີ ເພື່ອເຮັດວຽກຮ່ວມກັບບັນດາປະເທດສະມາຊິກອາຊຽນ ໃນການສະໜັບສະໜູນການຈັດຕັ້ງປະຕິບັດສົນທິສັນຍາດັ່ງກ່າວ ໂດຍສະເພາະ ພັນທະຕ່າງໆທີ່ເປັນການປົກປ້ອງ ແລະ ສະໜັບສະໜູນສິດທິຂອງຜູ້ຖືກເຄາະຮ້າຍ ແລະ ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການຮວມເອົາທຸກຄົນໃນສັງຄົມ.

ເພື່ອເປັນການສະເຫຼີມສະຫຼອງຄົບຮອບ 5 ປີຂອງສົນທິສັນຍາ, ບົດລາຍງານສະບັບນີ້ຈະແນໃສ່ ບົດລາຍງານປະຈຳປີກ່ຽວກັບ ການຄ້າມະນຸດ (TIP) ທີ່ບັນດາປະເທດສະມາຊິກອາຊຽນ ໄດ້ຈັດພິມເຜີຍແຜ່ໃນປີ 2020.

ບົດລາຍງານດັ່ງກ່າວ ເປັນການເກັບກຳວ່າ ບັນດາປະເທດສະມາຊິກອາຊຽນໄດ້ມີການລາຍງານແຫ່ງຊາດ ກ່ຽວກັບພັນທະຕ່າງໆຂອງຕົນທີ່ມີຕໍ່ສົນທິສັນຍາ ແລະ ເປັນການນຳສະເໜີຜົນການຄົ້ນຄວ້າທີ່ສຳຄັນ ແລະ ຂໍ້ສະເໜີແນະຕ່າງໆ ເພື່ອເປັນແນວທາງໃນການພັດທະນານະໂຍບາຍ ແລະ ການຮ່ວມມືໃນອະນາຄົດ ເພື່ອສະໜັບສະໜູນເປົ້າໝາຍຂອງສົນທິສັນຍາ.

ຫວັງວ່າ ການພິມເຜີຍແຜ່ ບົດລາຍງານຂໍ້ມູນພື້ນຖານປະຈຳປີ 2020 ຂອງແຜນງານ ASEAN-ACT ທີ່ກ່ຽວກັບບົດລາຍງານການຄ້າມະນຸດປະຈຳປີ ຂອງບັນດາປະເທດສະມາຊິກອາຊຽນນີ້ ຈະເຮັດໃຫ້ບົດລາຍງານແຫ່ງຊາດປະຈຳປີເຫຼົ່ານີ້ ມີຄວາມໂປ່ງໃສຫຼາຍຂຶ້ນ ເພື່ອສະແດງໃຫ້ເຫັນຜົນສຳເລັດໃນແຕ່ລະປີ ພ້ອມທັງສິ່ງທ້າທາຍທີ່ມີໃນເວລາທີ່ພະຍາຍາມຈັດຕັ້ງປະຕິບັດສົນທິສັນຍາ ຢ່າງເຕັມສ່ວນ ແລະ ຕໍ່ເນື່ອງ.

ແຜນງານ ASEAN-ACT ຈະປັບປຸງບົດລາຍງານດັ່ງກ່າວໃນແຕ່ລະປີ ຕະຫຼອດອາຍຸຂອງແຜນງານ (2018-2028) ແລະ ຈະສືບຕໍ່ເຮັດວຽກກັບອາຊຽນ ແລະ ບັນດາປະເທດສະມາຊິກອາຊຽນ ເພື່ອສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດພັນທະຕ່າງໆໃນສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP).



ທ່ານ ປອ. ນາງ ລູເຊຍ ເປຍໂຕຣເປົາລີ (Lucia Pietropaoli)

ຫົວໜ້າແຜນງານ ASEAN-ACT

# ສາລະບານ


1 ພາບລວມ: ຜົນຂອງບົດລາຍງານ

2 ພາບລວມ: ຂໍ້ສະເໜີແນະ

3 ສົນທິສັນຍາ

4 ປີ 2020 - 5 ປີ ນັບແຕ່ມື້ລົງນາມ

5 ດ້ວຍເຫດໃດ ຂໍ້ມູນຈຶ່ງມີຄວາມສໍາຄັນໃນການຈັດຕັ້ງປະຕິບັດວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໃນຄະດີຄ້າມະນຸດ?

6 ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງການຮູ້ຫຍັງແດ່ ເພື່ອເປັນຂໍ້ມູນປະກອບການຕັດສິນໃຈໃນການເປັນພະຍານ?

7 ບັນດາປະເທດສະມາຊິກອາຊຽນທີ່ເຜີຍແຜ່ຂໍ້ມູນການຄ້າມະນຸດ ແມ່ນມີຄວາມສໍາຄັນສໍາລັບ

8 ວິທີການທີ່ຄໍານຶງເຖິງຜູ້ຖືກເຄາະຮ້າຍໃນຄະດີຄ້າມະນຸດ: 22 ຂໍ້ມູນຕົວຊີ້ວັດຜົນການດໍາເນີນງານທີ່ສໍາຄັນ

9 ພາບລວມໃນປີ 2020

(1) ຄວາມໂປ່ງໃສ (2) ຂໍ້ມູນທ່າອ່ຽງຂອງການຄ້າມະນຸດ

(3) ຂໍ້ມູນການຄຸ້ມຄອງຄະດີຄ້າມະນຸດທີ່ສໍາຄັນ (4) ຄະດີຄ້າມະນຸດທີ່ໄດ້ສິ້ນສຸດຢູ່ຂັ້ນສານ

(5) ການຊົດເຊີຍໃຫ້ແກ່ຜູ້ຖືກເຄາະຮ້າຍ (6) ການຊ່ວຍເຫຼືອທາງດ້ານກົດໝາຍໃຫ້ແກ່ຜູ້ຖືກເຄາະຮ້າຍ

(7) ການໃຫ້ຄໍາໃຫ້ການທາງວິດີໂອລ່ວງໜ້າ ຂອງຜູ້ຖືກເຄາະຮ້າຍ

(8) ຂໍ້ມູນແຍກປະເພດຂອງຜູ້ຖືກເຄາະຮ້າຍ

(11) ຄວາມໂປ່ງໃສກ່ຽວກັບ ເຈົ້າໜ້າທີ່ທີ່ເປັນຜູ້ສົມຮູ້ຮ່ວມຄິດ

(12) ຄວາມໂປ່ງໃສ ກ່ຽວກັບຄໍາຕັດສິນຄະດີຄ້າມະນຸດ

15 ເອກະສານຊ້ອນທ້າຍ 1: 22 ຂໍ້ມູນຕົວຊີ້ວັດການຄ້າມະນຸດທີ່ສໍາຄັນ

ຕົວຊີ້ວັດທີ 1-5

ຕົວຊີ້ວັດທີ 6-9

ຕົວຊີ້ວັດທີ 10-12

ຕົວຊີ້ວັດທີ 13-16

ຕົວຊີ້ວັດທີ 17-22

21 ຄໍາຂອບໃຈ

# ພາບລວມ: ຜົນການຄົ້ນຄວ້າ

3 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ບົດລາຍງານການຄ້າມະນຸດປະຈຳປີ 2020 ຊຶ່ງໄດ້ເຜີຍແຜ່ຕໍ່ມະຫາຊົນໃນປີ 2021.

2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ເຜີຍແຜ່ຂໍ້ມູນທ່າອ່ຽງ 3-5 ປີຂອງຕົວຊີ້ວັດການຄ້າມະນຸດທີ່ສຳຄັນ.

2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ສາມາດລາຍງານທັງສີ່ຕົວຊີ້ວັດການຄຸ້ມຄອງຄະດີຄ້າມະນຸດ.

1 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນກ່ຽວກັບຜົນໄດ້ຮັບຂອງຄະດີຄ້າມະນຸດທີ່ສິ້ນສຸດໃນສານຂັ້ນຕົ້ນ ໃນປີ 2020.

2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ຈັດພິມເຜີຍແຜ່ຂໍ້ມູນຈຳນວນຄະດີຄ້າມະນຸດ ທີ່ໄດ້ສະຫຼຸບປິດຄະດີໃນສານຂັ້ນຕົ້ນໃນປີ 2020.

0 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ທີ່ເຜີຍແຜ່ຂໍ້ມູນອັດຕາສ່ວນ (ເປີເຊັນ) ຂອງຄະດີຄ້າມະນຸດ ທີ່ໄດ້ສິ້ນສຸດໃນປີ 2020 ທີ່ຜູ້ຖືກເຄາະຮ້າຍໄດ້ຮັບຄ່າຊົດເຊີຍ.

2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນຈຳນວນຕົວເລກຄະດີຄ້າມະນຸດທີ່ໄດ້ສົ່ງຟ້ອງ ເພື່ອໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບການຊ່ວຍເຫຼືອດ້ານກົດໝາຍ.

1 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນຈຳນວນຕົວເລກຜູ້ຖືກເຄາະຮ້າຍ ທີ່ສາມາດໃຫ້ຄຳໃຫ້ການຜ່ານທາງວີດີໂອລ່ວງໜ້າ ກ່ອນການປະຊຸມສານ ໃນປີ 2020.

4 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນຜູ້ຖືກເຄາະຮ້າຍ ທີ່ແຍກຕາມເພດ.

4 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນຜູ້ຖືກເຄາະຮ້າຍ ທີ່ແຍກຕາມອາຍຸ.

0 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນທີ່ແຍກກຸ່ມຜູ້ຖືກເຄາະຮ້າຍ ທີ່ແຍກຕາມຄວາມພິການ.

2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ບົດລາຍງານການຄ້າມະນຸດປະຈຳປີ 2020 ທີ່ສະແດງຈຳນວນຕົວເລກຂອງການສືບສວນ-ສອບສວນ, ການດຳເນີນຄະດີ ຫຼື ການລົງໂທດຕໍ່ເຈົ້າໜ້າທີ່ ທີ່ມີສ່ວນພົວພັນກັບຄະດີການຄ້າມະນຸດ.

1 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຄຳຕັດສິນຄະດີຄ້າມະນຸດຂອງສານ ທີ່ໄດ້ສິ້ນສຸດໃນປີ 2020 ໂດຍບໍ່ລະບຸຊື່ ລົງເຜີຍແຜ່ທາງອອນລາຍ.

# ພາບລວມ: ຂໍ້ສະເໜີແນະ

1 ແຜນງານ ASEAN-ACT ຮ່ວມມືກັບອາຊຽນ ເພື່ອຊ່ວຍເຫຼືອລັດພາຄີຂອງສົນທິສັນຍາ ACTIP ໃນການເຜີຍແຜ່ບົດລາຍງານການຄ້າມະນຸດປະຈຳປີຂອງຕົນ.

2 ແຜນງານ ASEAN-ACT ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ທີ່ມີຄວາມສົນໃຈ ເພື່ອຊ່ວຍໃນການນຳສະເໜີຂໍ້ມູນທ່າອ່ຽງ ທີ່ສະແດງໃຫ້ເຫັນການພັດທະນາຂຶ້ນໃນແຕ່ລະປີ ສຳລັບຂໍ້ມູນການຄ້າມະນຸດທີ່ສຳຄັນນັ້ນ ກໍ່ເພື່ອເພີ່ມທະວີຄວາມເຂົ້າໃຈຕໍ່ກັບທ່າອ່ຽງຂອງຄະດີຄ້າມະນຸດ.

3 ແຜນງານ ASEAN-ACT ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການປັບປຸງການເກັບກຳ ແລະ ວິເຄາະຂໍ້ມູນການຄ້າມະນຸດ.

4 ແຜນງານ ASEAN-ACT ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການເຜີຍແຜ່ຂໍ້ມູນຂອງບົດລາຍງານການຄ້າມະນຸດປະຈຳປີຂອງຕົນ ທີ່ກ່ຽວກັບຄະດີຄ້າມະນຸດໄດ້ສິ່ງຟ້ອງ ແລະ ສິ້ນສຸດໃນປີທີ່ມີການລາຍງານ ແລະ ຜົນໄດ້ຮັບຂອງຄະດີເຫຼົ່ານີ້.

5 ແຜນງານ ASEAN-ACT ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການເຜີຍແຜ່ຂໍ້ມູນຂອງບົດລາຍງານການຄ້າມະນຸດປະຈຳປີຂອງຕົນ ທີ່ກ່ຽວກັບການໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມມີຄ່າຊົດເຊີຍ, ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການໃຫ້ຄຳໃຫ້ການທາງວິດີໂອລ່ວງໜ້າ.

6 ແຜນງານ ASEAN-ACT ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການເກັບກຳ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນ ທີ່ກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ແຍກຕາມ ເພດ, ອາຍຸ ແລະ ສະຖານະພາບຄວາມພິການ.

7 ແຜນງານ ASEAN-ACT ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການເຜີຍແຜ່ບົດລາຍງານການຄ້າມະນຸດປະຈຳປີຂອງຕົນ ກ່ຽວກັບຈຳນວນຕົວເລກຂອງການສືບສວນ-ສອບສວນ, ການດຳເນີນຄະດີ ຫຼື ການລົງໂທດຕໍ່ເຈົ້າໜ້າທີ່ ທີ່ມີສ່ວນພົວພັນກັບການຄ້າມະນຸດ ໃນໄລຍະເວລາການລາຍງານ.

8 ແຜນງານ ASEAN-ACT ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການປັບປຸງຄວາມໂປ່ງໃສ ທີ່ກ່ຽວຂ້ອງກັບການຕັດສິນຄະດີການຄ້າມະນຸດ ໂດຍຜ່ານການເຜີຍແຜ່ການຕັດສິນ.



# ສົນທິສັນຍາ

ໃນເດືອນ ພະຈິກ 2015, 10 ປະເທດສະມາຊິກອາຊຽນ ໄດ້ລົງນາມໃນ ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ສົນທິສັນຍາ).

ໃນການເປີດສົນທິສັນຍາ ໄດ້ກ່າວວ່າ: ບັນດາລັດພາຄີທີ່ໄດ້ລົງນາມ ຮັບຮູ້ວ່າການຄ້າມະນຸດຖືເປັນການລະເມີດສິດທິມະນຸດ ແລະ ການກະທຳຜິດຕໍ່ກຽດສັກສີຄວາມເປັນມະນຸດ.

ບັນດາລັດພາຄີທີ່ໄດ້ລົງນາມ ຍັງຮັບຮູ້ວ່າ ການຄ້າມະນຸດ ແມ່ນເກີດຂຶ້ນຈາກການປະສົມປະສານຂອງຫຼາຍໆປັດໃຈ ລວມທັງການສໍ້ລາດບັງຫຼວງໃນກົງຈັກລັດ, ຄວາມທຸກຍາກ, ຄວາມບໍ່ມີສະຖຽນລະພາບທາງດ້ານເສດຖະກິດ, ລະບົບກົດໝາຍທີ່ບໍ່ມີປະສິດທິພາບ, ອາຊະຍາກຳທີ່ມີການຈັດຕັ້ງ, ແລະ ຄວາມຕ້ອງການ ທີ່ສະໜັບສະໜູນຕໍ່ທຸກຮູບແບບຂອງການຂູດຮີດແກ່ບຸກຄົນ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ ທີ່ນຳໄປສູ່ການຄ້າມະນຸດ ແລະ ການຄ້າມະນຸດ ຕ້ອງໄດ້ຮັບການແກ້ໄຂຢ່າງມີປະສິດທິຜົນ.

ບັນດາລັດພາຄີທີ່ໄດ້ລົງນາມ ຍັງຮັບຮູ້ຄວາມຈຳເປັນໃນການສ້າງເຄື່ອງມືໃນລະດັບພາກພື້ນທີ່ຈະຮັບມືກັບການຄ້າມະນຸດ ທີ່ເປັນກອບກົດໝາຍ ສຳລັບການຈັດຕັ້ງປະຕິບັດໃນລະດັບພາກພື້ນ ຂອງບັນດາປະເທດອາຊີຕາເວັນອອກສຽງໃຕ້ ໃນການປ້ອງກັນ ແລະ ຕ້ານການຄ້າມະນຸດ ລວມທັງການປົກປ້ອງ ແລະ ການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ສົນທິສັນຍາ ໄດ້ກຳນົດພັນທະຜູກມັດທາງກົດໝາຍ [ເພື່ອ…] ຊ່ວຍປະເທດສະມາຊິກອາຊຽນ ຈັດການກັບບັນດາສິ່ງທ້າທາຍລະດັບຊາດທີ່ມີຄວາມຫຼາກຫຼາຍ, ທີ່ເປັນບູລິມະສິດ ແລະ ຍຸດທະສາດ ໃນການຕ້ານການຄ້າມະນຸດ.

# ປີ 2020 – 5 ປີ ນັບແຕ່ມື້ລົງນາມ

ສົນທິສັນຍາ ໄດ້ກຳນົດເອົາວິທີການຮ່ວມມື ເພື່ອສ້າງການພົວພັນໃນການຕອບໂຕ້ໃນລະດັບພາກພື້ນທີ່ເຂັ້ມແຂງໃນການປ້ອງກັນ ແລະ ຕ້ານການຄ້າມະນຸດ ແລະ ສ້າງຄວາມເຂັ້ມແຂງໃນການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.

ການຈັດຕັ້ງປະຕິບັດສົນທິສັນຍາ ແມ່ນອີງໃສ່ການເກັບກຳ, ການວິເຄາະ ແລະ ການແລກປ່ຽນຂໍ້ມູນການຄ້າມະນຸດໃນລະດັບຊາດ ເພື່ອກຳນົດວ່າພັນທະຕ່າງໆຕາມສົນທິສັນຍາໄດ້ຮັບການສະໜັບສະໜູນ.

ການເຜີຍແຜ່ບົດລາຍງານປະຈຳປີກ່ຽວກັບການຄ້າມະນຸດທີ່ມີຄວາມໂປ່ງໃສ ແມ່ນເພື່ອຮັບປະກັນວ່າ ຫຼາຍຮ້ອຍອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງບໍ່ສັງກັດລັດຖະບານ ໃນທົ່ວປະເທດສະມາຊິກອາຊຽນ ທີ່ດຳເນີນວຽກງານໃນການສະໜັບສະໜູນເປົ້າໝາຍຂອງສົນທິສັນຍາ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໄດ້ມີຂໍ້ມູນອັນດຽວກັນ ເພື່ອໃຊ້ເປັນບ່ອນອີງ ແລະ ປັບປຸງການສະໜອງການບໍລິການຂອງຕົນ.

ເປົ້າໝາຍ ແມ່ນເພື່ອຫຼີກລ້ຽງຄວາມກະແຈກກະຈາຍຂອງຂໍ້ມູນ ແລະ ວິທີການທີ່ເອົາແຕ່ອົງການຈັດຕັ້ງຂອງຕົນເປັນຫຼັກໃນການເກັບຂໍ້ມູນ ຊຶ່ງບໍ່ໄດ້ສະທ້ອນໃຫ້ເຫັນເຖິງພາບລວມຂອງການດຳເນີນງານລະດັບຊາດ ໃນການຈັດຕັ້ງປະຕິບັດສົນທິສັນຍາ.





# ດ້ວຍເຫດໃດ ຂໍ້ມູນຈຶ່ງມີຄວາມສຳຄັນໃນການຈັດຕັ້ງປະຕິບັດ ວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໃນຄະດີຄ້າມະນຸດ?

ບັນດາປະເທດສະມາຊິກອາຊຽນ ໄດ້ກຳນົດວ່າ ການປະຕິບັດທີ່ຕ້ອງຄຳນຶງເຖິງຄວາມອ່ອນໄຫວຂອງຜູ້ຖືກເຄາະຮ້າຍໃນທຸກຂັ້ນຕອນຂອງຄະດີຄ້າມະນຸດ ແມ່ນເປັນບູລິມະສິດ.

ການດຳເນີນຄະດີກັບຜູ້ຄ້າມະນຸດຫຼັກໆ ແມ່ນອີງໃສ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ມີການກະກຽມຄວາມພ້ອມ ເພື່ອເປັນພະຍານໃນການດຳເນີນຄະດີທາງອາຍາ ແລະ ສະແດງຫຼັກຖານ ທີ່ເລົ່າເຫດການຄືນ ທີ່ເກີດຂຶ້ນກັບເຂົາເຈົ້າ. ສິ່ງນີ້ອາດກາຍເປັນປະສົບການທີ່ມີຄວາມບອບຊ້ຳທາງດ້ານຈິດໃຈ ແລະ ຜູ້ຖືກເຄາະຮ້າຍ ອາດຕ້ອງການຂໍ້ມູນປະກອບການຕັດສິນໃຈກ່ອນ ວ່າຈະເຮັດໜ້າທີ່ເປັນພະຍານ ຫຼື ບໍ່.

ຖ້າບໍ່ມີຂໍ້ມູນຄະດີຄ້າມະນຸດລະດັບຊາດ ທີ່ອະທິບາຍຜົນໄດ້ຮັບຂອງຄະດີໃຫ້ທັງຜູ້ຄ້າມະນຸດ ແລະ ຜູ້ຖືກເຄາະຮ້າຍ ແມ່ນເປັນໄປບໍ່ໄດ້ທີ່ຜູ້ຖືກເຄາະຮ້າຍຈະມີຂໍ້ມູນປະກອບການຕັດສິນໃຈກ່ອນ.

ຄວາມໂປ່ງໃສຂອງບົດລາຍງານການຄ້າມະນຸດລະດັບຊາດປະຈຳປີ ໃນທົ່ວພາກພື້ນອາຊຽນ ໄດ້ສະແດງໃຫ້ເຫັນເຖິງຄຳໝັ້ນສັນຍາ ຕໍ່ຄວາມມຸ້ງມາດປາຖະໜາຂອງພາກພື້ນຕໍ່ສົນທິສັນຍາ ເພື່ອຕ້ານການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.

ການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບວິທີການຈັດການຄະດີຄ້າມະນຸດ ໃນທົ່ວພາກພື້ນອາຊຽນ ແລະ ການປະຕິບັດຕໍ່ຜູ້ຖືກເຄາະຮ້າຍທີ່ເປັນພະຍານໃນຄະດີເຫຼົ່ານີ້ ຫວັງຢ່າງຍິ່ງວ່າ ຈະສາມາດຊ່ວຍປັບປຸງການປະຕິບັດຕໍ່ຜູ້ຖືກເຄາະຮ້າຍ ແລະ ໝາກຜົນທີ່ເຂົາເຈົ້າໄດ້ຮັບ. ຊຶ່ງໃນທາງກັບກັນ ອາດຊ່ວຍຊຸກຍູ້ຜູ້ຖືກເຄາະຮ້າຍຄົນອື່ນ ຫັນມາໃຫ້ການໃນຄະດີຄ້າມະນຸດ ຫຼາຍຂຶ້ນໃນອະນາຄົດ.



# ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງການຮູ້ຫຍັງແດ່ ເພື່ອ ເປັນຂໍ້ມູນປະກອບການຕັດສິນໃຈ ທີ່ຈະເປັນ ພະຍານ?



# ບັນດາປະເທດສະມາຊິກອາຊຽນ

## ທີ່ເຜີຍແຜ່ບົດລາຍງານການຄ້າມະນຸດປະຈຳປີ ແມ່ນມີຄວາມສຳຄັນ ສຳລັບ

### ບັນດາປະເທດສະມາຊິກອາຊຽນ

ທີ່ໄດ້ລົງນາມໃນສົນທິສັນຍາອາຊຽນວ່າດ້ວຍ ການຕ້ານການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ ໃນປີ 2015.

ເນື່ອງຈາກປະເທດສະມາຊິກໃຫ້ຄຳໝັ້ນສັນຍາ ໃນການປະສານສົມທົບໃນການຕໍ່ສູ້ກັບການຄ້າມະນຸດ.
ການເຜີຍແຜ່ບົດລາຍງານການຄ້າມະນຸດປະຈຳປີ ໄດ້ສ້າງຫຼັກຖານພື້ນຖານ ເພື່ອປະເມີນວ່າວຽກງານຂອງຕົນມີຜົນກະທົບ ຫຼື ບໍ່.

### ບັນດາອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງບໍ່ສັງກັດລັດຖະບານ

ໄດ້ໃຫ້ການສະໜັບສະໜູນດ້ານທີ່ພັກອາໄສ, ໃຫ້ການຊ່ວຍເຫຼືອດ້ານກົດໝາຍ, ໃຫ້ການບໍລິການທາງການແພດ ແລະ ການໃຫ້ຄຳປຶກສາໃຫ້ແກ່ຜູ້ຖືກເຄາະຮ້າຍ.

ເນື່ອງຈາກເຂົາເຈົ້າໄດ້ປະກອບສ່ວນໃນການເກັບກຳ ແລະ ວິເຄາະຂໍ້ມູນການຄ້າມະນຸດ ເພື່ອສະໜອງບໍລິການທີ່ຫຼາກຫຼາຍ ໃນລັກສະນະທີ່ມີປະສິດທິພາບ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

### ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ເນື່ອງຈາກເຂົາເຈົ້າຕ້ອງການຂໍ້ມູນໃດໜຶ່ງ ເພື່ອປະກອບການຕັດສິນໃຈວ່າຈະສະແດງ ຫຼັກຖານຂອງຄະດີການຄ້າມະນຸດ ຫຼື ບໍ່.

### ບັນດາຂະແໜງການຍຸຕິທຳພາຍໃນປະເທດ

ເຊັ່ນ: ຕຳຫຼວດ, ໄອຍະການ ແລະ ສານ.

ເນື່ອງຈາກຂະແໜງການດັ່ງກ່າວ ຕ້ອງໄດ້ອີງໃສ່ພະຍານ ແລະ ຜູ້ຖືກເຄາະຮ້າຍໃນການສະໜອງຫຼັກຖານຂອງຄະດີການຄ້າມະນຸດ

# ວິທີການປະຕິບັດທີ່ຄຳນຶງເຖິງຜູ້ຖືກເຄາະຮ້າຍ ໃນຄະດີຄ້າມະນຸດ:

# 22 ຂໍ້ມູນຕົວຊີ້ວັດຜົນການດຳເນີນງານທີ່ສຳຄັນ

ໃນສົນທິສັນຍາສະບັບນີ້, ປະເທດສະມາຊິກອາຊຽນ ໄດ້ກຳນົດການປະຕິບັດທີ່ຄຳນຶງເຖິງຄວາມອ່ອນໄຫວຂອງຜູ້ຖືກເຄາະຮ້າຍຂອງຄະດີຄ້າມະນຸດ ແມ່ນເປັນບູລິມະສິດ.

ປະເທດສະມາຊິກອາຊຽນສ່ວນໃຫຍ່ ໄດ້ເກັບກຳຂໍ້ມູນຄະດີຄ້າມະນຸດເປັນຈຳນວນຫຼວງຫຼາຍ. ແຕ່ເຖິງຢ່າງໃດກໍ່ຕາມ, ບັນດາປະເທດສະມາຊິກອາຊຽນ ຍັງສາມາດພິຈາລະນາ ການນຳສະເໜີ 22 ຂໍ້ມູນຕົວຊີ້ວັດຕໍ່ໄປນີ້ ເຂົ້າໃນບົດລາຍງານປະຈຳປີກ່ຽວກັບການຄ້າມະນຸດລະດັບຊາດຂອງຕົນ. ປະເທດສະມາຊິກອາຊຽນສ່ວນໃຫຍ່ ກຳລັງເກັບກຳຂໍ້ມູນເຫຼົ່ານີ້ຢູ່ແລ້ວ ແລະ ການສັງລວມເອົາຂໍ້ມູນດັ່ງກ່າວ ເຂົ້າໃນບົດລາຍງານປະຈຳປີກ່ຽວກັບການຄ້າມະນຸດລະດັບຊາດ ຈະເຮັດໃຫ້ຮັບຮູ້ເຖິງພາບລວມທີ່ປະເທດສະມາຊິກ ກຳລັງຈັດຕັ້ງປະຕິບັດພັນທະຂອງຕົນຕໍ່ສົນທິສັນຍາ ແລະ ປະສົບການຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນການດຳເນີນຄະດີເຫຼົ່ານີ້ ຖ້າເຂົາເຈົ້າເລືອກທີ່ຈະເປັນພະຍານ ໃນການດຳເນີນຄະດີທາງອາຍາ ຫຼື ສະເໜີໃຫ້ພິຈາລະນາການຄ່າຊົດເຊີຍທາງແພ່ງ.

ຂໍ້ມູນຕົວຊີ້ວັດຜົນການດຳເນີນງານທີ່ສຳຄັນ (KPIs) ຂ້າງລຸ່ມ ສະໜັບສະໜູນ ບັນດາຫຼັກການ ແລະ ບົດແນະນຳວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດ ທີ່ຖືກພັດທະນາໂດຍ ສຳນັກງານຄ້າຫຼວງໃຫຍ່ດ້ານສິດທິມະນຸດ ຂອງສະຫະປະຊາຊາດ ພ້ອມທັງ 8 ຕົວຊີ້ວັດທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ແລະ ຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຕົວຊີ້ວັດດັ່ງກ່າວ ທີ່ຖືກພັດທະນາໂດຍແຜນງານ ASEAN-ACT.

ບົດສົນທະນາລະອຽດເພີ່ມເຕີມກ່ຽວກັບ 22 ຂໍ້ມູນຕົວຊີ້ວັດຜົນການດຳເນີນງານທີ່ສຳຄັນ ສາມາດເບິ່ງໄດ້ຢູ່ເອກະສານຊ້ອນທ້າຍ 1 ແລະ ໃນຊຸດເຄື່ອງມືຂໍ້ມູນຕົວຊີ້ວັດຜົນການດຳເນີນງານທີ່ສຳຄັນໃນການຄ້າມະນຸດ ຂອງແຜນງານ ASEAN-ACT : ການສ້າງພື້ນຖານຫຼັກຖານສຳລັບວິທີການດຳເນີນງານທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນທົ່ວພາກພື້ນອາຊຽນ.



# ພາບລວມໃນປີ 2020

ຜົນຂອງບົດລາຍງານດັ່ງຕໍ່ໄປນີ້ ແມ່ນໄດ້ອີງໃສ່ການທົບທວນບົດລາຍງານການຄ້າມະນຸດປະຈຳປີ ທີ່ໄດ້ເຜີຍແຜ່ທາງອອນລາຍໂດຍ 4 ຈາກ 10 ປະເທດສະມາຊິກອາຊຽນ ຊຶ່ງເປັນລັດພາຄີຂອງສົນທິສັນຍາ.

ບົດລາຍງານການຄ້າມະນຸດປະຈຳປີເຫຼົ່ານີ້ ສາມາດເຂົ້າເບິ່ງໄດ້ຈາກຄັງຂໍ້ມູນຂອງແຜນງານ ASEAN-ACT Partnership Hub: aseanactpartnershiphub.com



ກຳປູເຈຍ ອິນໂດເນເຊຍ ຟີລິປິນ ໄທ



# 1 ຄວາມໂປ່ງໃສ

3 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ ບົດລາຍງານການຄ້າມະນຸດປະຈຳປີ 2020 ຊຶ່ງເຜີຍແຜ່ສູ່ມະຫາຊົນໃນປີ 2021: ກຳປູເຈຍ, ຟີລິບປິນ, ໄທ.

**ຂໍ້ສະເໜີແນະ:**

**ແຜນງານ ASEAN-ACT ຮ່ວມມືກັບອາຊຽນຊ່ວຍເຫຼືອລັດພາຄີຂອງສົນທິສັນຍາ ACTIP ໃນການເຜີຍແຜ່ບົດລາຍງານການຄ້າມະນຸດປະຈຳປີຂອງຕົນ.**

# 2 ຂໍ້ມູນທ່າອ່ຽງຂອງການຄ້າມະນຸດ

2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນທ່າອ່ຽງໄລຍະ 3-5 ປີ ກ່ຽວກັບຕົວຊີ້ວັດການຄ້າມະນຸດທີ່ສຳຄັນ ເພື່ອເປັນຫຼັກຖານໃຫ້ແກ່ລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມໃນການພິຈາລະນາປັບດານະໂຍບາຍ ແລະ ແຜນງານຕ່າງໆຂອງຕົນ ໃນການຕ້ານການຄ້າມະນຸດ: ໄທ ແລະ ອິນໂດເນເຊຍ.

**ຂໍ້ສະເໜີແນະ:**

**ແຜນງານ ASEAN-ACT ເຮັດວຽກກັບລັດພາຄີຂອງຂອງສົນທິສັນຍາ ACTIP ທີ່ມີຄວາມສົນໃຈ ເພື່ອຊ່ວຍໃນການນຳສະເໜີຂໍ້ມູນທ່າອ່ຽງ ທີ່ສະແດງໃຫ້ເຫັນການພັດທະນາຂໍ້ມູນການຄ້າມະນຸດທີ່ສຳຄັນ ໃນແຕ່ລະປີ ນັ້ນກໍ່ເພື່ອເພີ່ມທະວີຄວາມເຂົ້າໃຈກ່ຽວກັບທ່າອ່ຽງຂອງຄະດີຄ້າມະນຸດ.**



## 3 ຂໍ້ມູນການຄຸ້ມຄອງຄະດີຄ້າມະນຸດທີ່ສຳຄັນ

2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ສາມາດລາຍງານ ກ່ຽວກັບ 4 ຕົວຊີ້ວັດໃນການຄຸ້ມຄອງຄະດີຄ້າມະນຸດຕໍ່ໄປນີ້ ທີ່ກ່ຽວຂ້ອງກັບການສືບສວນ-ສອບສວນ, ການດຳເນີນຄະດີ, ຄະດີໃນສານຂັ້ນຕົ້ນ ແລະ ຂັ້ນອຸທອນ ແລະ ໄລຍະເວລາສະເລ່ຍຂອງຄະດີການຄ້າມະນຸດ: ອິນໂດເນເຊຍ ແລະ ໄທ.



**ຂໍ້ສະເໜີແນະ:**

**ແຜນງານ ASEAN-ACT ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການປັບປຸງການເກັບກຳ, ການວິເຄາະ ແລະ ການເຜີຍແຜ່ຂໍ້ມູນການຄ້າມະນຸດ.**




## 4 ຄະດີຄ້າມະນຸດທີ່ໄດ້ສິ້ນສຸດຢູ່ຂັ້ນສານ

1 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນ ກ່ຽວກັບຜົນໄດ້ຮັບຂອງຄະດີທີ່ໄດ້ສິ້ນສຸດໃນສານຂັ້ນຕົ້ນ ໃນປີ 2020: ປະເທດໄທ.



ສ່ວນ 2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນ ກ່ຽວກັບຈຳນວນຕົວເລກຄະດີຄ້າມະນຸດໃນສານຂັ້ນຕົ້ນທີ່ໄດ້ສິ້ນສຸດ ໃນປີ 2020: ປະເທດອິນໂດເນເຊຍ ໄດ້ສຳເລັດ 200 ຄະດີ ແລະ ປະເທດໄທ ໄດ້ສຳເລັດ 199 ຄະດີ.



**ຂໍ້ສະເໜີແນະ:**

**ແຜນງານ ASEAN-ACT ໄດ້ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການເຜີຍແຜ່ຂໍ້ມູນ ຂອງບົດລາຍງານການຄ້າມະນຸດປະຈຳປີຂອງຕົນ ທີ່ກ່ຽວກັບຄະດີຄ້າມະນຸດທີ່ໄດ້ຖືກສົ່ງຟ້ອງ ແລະ ສິ້ນສຸດ ໃນປີທີ່ມີການລາຍງານ ແລະ ຜົນໄດ້ຮັບຂອງຄະດີເຫຼົ່ານີ້.**

## 5 ການຊົດເຊີຍໃຫ້ແກ່ຜູ້ຖືກເຄາະຮ້າຍ

0 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນສັດສ່ວນ (ເປີເຊັນ) ຂອງຄະດີຄ້າມະນຸດທີ່ໄດ້ສິ້ນສຸດໃນປີ 2020 ທີ່ຜູ້ຖືກເຄາະຮ້າຍໄດ້ຮັບຄ່າຊົດເຊີຍ ຈາກກອງທຶນຊົດເຊີຍແຫ່ງຊາດ ຫຼື ການຊົດເຊີຍ/ຄ່າເສຍຫາຍຈາກຜູ້ຄ້າມະນຸດ.






## 6 ການຊ່ວຍເຫຼືອທາງດ້ານກົດໝາຍໃຫ້ແກ່ຜູ້ຖືກເຄາະຮ້າຍ

2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນກ່ຽວກັບຈໍານວນຕົວເລກຄະດີຄ້າມະນຸດ ທີ່ໄດ້ສົ່ງຟ້ອງ ເພື່ອໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ: ປະເທດກໍາປູເຈຍ ແລະ ອິນໂດເນເຊຍ



## 7 ການໃຫ້ຄຳໃຫ້ການຜ່ານທາງວີດີໂອລ່ວງໜ້າຂອງຜູ້ຖືກເຄາະຮ້າຍ

1 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນຈຳນວນຕົວເລກຜູ້ຖືກເຄາະຮ້າຍ ທີ່ສາມາດໃຫ້ການຜ່ານທາງວີດີໂອລ່ວງໜ້າ ກ່ອນການປະຊຸມສານ ໃນປີ 2020: ປະເທດໄທ

**ຂໍ້ສະເໜີແນະ:**

**ແຜນງານ ASEAN-ACT ໄດ້ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການເຜີຍແຜ່ຂໍ້ມູນໃນບົດລາຍງານການຄ້າມະນຸດປະຈຳປີຂອງຕົນ ກ່ຽວກັບການໃຫ້ການສະໜັບສະໜູນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມມີ: ການຊົດເຊີຍ, ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການໃຫ້ຄຳໃຫ້ການຜ່ານທາງວີດີໂອລ່ວງໜ້າ**

## 8 ຂໍ້ມູນແຍກປະເພດຜູ້ຖືກເຄາະຮ້າຍ

9

4 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນຜູ້ຖືກເຄາະຮ້າຍ ທີ່ແຍກຕາມເພດ: ປະເທດກຳປູເຈຍ, ອິນໂດເນເຊຍ, ຟີລິປິນ ແລະ ໄທ.

10

4 ຈາກ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຂໍ້ມູນຜູ້ຖືກເຄາະຮ້າຍ ທີ່ແຍກຕາມອາຍຸ: ປະເທດກຳປູເຈຍ, ອິນໂດເນເຊຍ, ຟີລິບປິນ ແລະ ໄທ.

0 ຈາກ 10 ລັດພາຄີຂອງສົນທິສັນຍາ ACTIP ທີ່ໄດ້ເຜີຍແຜ່ຂໍ້ມູນຜູ້ຖືກເຄາະຮ້າຍ ທີ່ແຍກຕາມຄວາມພິການ.

**ຂໍ້ສະເໜີແນະ:**

**ແຜນງານ ASEAN-ACT ໄດ້ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການເກັບກຳ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນ ທີ່ກ່ຽວຂ້ອງກັບການຄ້າມະນຸດ ທີ່ແຍກຕາມເພດ, ອາຍຸ ແລະ ສະຖານະຄວາມພິການ.**



## 11 ຄວາມໂປ່ງໃສຂອງຄຳຕັດສິນຄະດີຄ້າມະນຸດ

2 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ບົດລາຍງານການຄ້າມະນຸດປະຈຳປີ 2020 ທີ່ສະແດງຈຳນວນຕົວເລກຂອງການສືບສວນ-ສອບສວນ, ການດຳເນີນຄະດີ ຫຼື ການລົງໂທດຕໍ່ເຈົ້າໜ້າທີ່ ທີ່ມີສ່ວນພົວພັນກັບຄະດີຄ້າມະນຸດ. ປະເທດໄທ ແລະ ຟີລິປິນ.



**ຂໍ້ສະເໜີແນະ:**

**ແຜນງານ ASEAN-ACT ໄດ້ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການເຜີຍແຜ່ບົດລາຍງານການຄ້າມະນຸດປະຈຳປີຂອງຕົນ ກ່ຽວກັບຈຳນວນຕົວເລກຂອງການສືບສວນ-ສອບສວນ, ການດຳເນີນຄະດີ ຫຼື ການລົງໂທດຕໍ່ເຈົ້າໜ້າທີ່ ທີ່ມີສ່ວນພົວພັນກັບຄະດີຄ້າມະນຸດ ໃນແຕ່ລະໄລຍະຂອງການລາຍງານ.**

## 12 ຄວາມໂປ່ງໃສກ່ຽວກັບ ເຈົ້າໜ້າທີ່ທີ່ມີສ່ວນພົວພັນ

1 ໃນ 10 ລັດພາຄີຂອງສົນທິສັນຍາ ACTIP ໄດ້ເຜີຍແຜ່ຄຳຕັດສິນຄະດີຄ້າມະນຸດຂອງສານທີ່ໄດ້ສິ້ນ ໃນປີ 2020 ໂດຍບໍ່ລະບຸຊື່ລົງເຜີຍແຜ່ທາງອອນລາຍ: ຖານຂໍ້ມູນຄຳຕັດສິນຂອງສານສູງ, ປະເທດອິນໂດເນເຊຍ



**ຂໍ້ສະເໜີແນະ:**

**ແຜນງານ ASEAN-ACT ໄດ້ເຮັດວຽກຮ່ວມກັບລັດພາຄີຂອງສົນທິສັນຍາ ACTIP ໃນການປັບປຸງຄວາມໂປ່ງໃສ ທີ່ກ່ຽວຂ້ອງກັບຄຳຕັດສິນໃນຄະດີຄ້າມະນຸດ ໂດຍການເຜີຍແຜ່ຄຳຕັດສິນ.**



# ເອກະສານຊ້ອນທ້າຍ 1
## 22 ຂໍ້ມູນຕົວຊີ້ວັດການຄ້າມະນຸດທີ່ສຳຄັນ

ແຜນງານ ASEAN-ACT ໄດ້ພັດທະນາຊຸດເຄື່ອງມື ກ່ຽວກັບວິທີການລາຍງານ 22 ຂໍ້ມູນຕົວຊີ້ວັດການຄ້າມະນຸດເຫຼົ່ານີ້ ຊຶ່ງຍັງໄດ້ສະແດງໃຫ້ເຫັນບາງຕົວຢ່າງ ຂອງປະເທດສະມາຊິກອາຊຽນ ທີ່ໄດ້ປະຕິບັດພັນທະໃນການລາຍງານ.

ບັນດາເອກະສານຊ້ອນທ້າຍທີ່ເປັນຊຸດເຄື່ອງມື ໄດ້ຊ່ວຍນຳສະເໜີຂໍ້ມູນທ່າອ່ຽງ ກ່ຽວກັບຂໍ້ມູນຕົວຊີ້ວັດຂອງການຄ້າມະນຸດທີ່ສຳຄັນ.

ໃນຫົວຂໍ້: ການດຳເນີນການປະຕິບັດທີ່ດີ ໃນການເກັບກຳຂໍ້ມູນການຄ້າມະນຸດ ເປັນຄູ່ມືລະອຽດ ກ່ຽວກັບການເກັບກຳຂໍ້ມູນການຄ້າມະນຸດໃນທຸກດ້ານ ທີ່ໄດ້ເຜີຍແຜ່ໂດຍສະຖາບັນເນັກຊັດ (Nexus) ໃນປີ 2019 ແລະ ເປັນຄູ່ມືທີ່ມີຄຸນຄ່າ ສຳລັບບັນດາປະເທດທີ່ກຳລັງຊອກຫາຄຳແນະນຳໃນແຕ່ລະຂັ້ນຕອນ.

ແຜນງານ ASEAN-ACT ຈະສືບຕໍ່ໃຫ້ການຊ່ວຍເຫຼືອແກ່ບັນດາປະເທດສະມາຊິກອາຊຽນ ໃນການສ້າງຄວາມເຂັ້ມແຂງໃນການລາຍງານ ກ່ຽວກັບການຈັດຕັ້ງປະຕິບັດພັນທະຕ່າງໆທີ່ກຳນົດໄວ້ໃນສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ.





# ຕົວຊີ້ວັດທີ 1-5




## ຫົວຂໍ້: ຂໍ້ມູນການຄຸ້ມຄອງຄະດີ ຈາກຕໍາຫຼວດ, ໄອຍະການ ແລະ ສານ

**ເປັນຫຍັງວິທີການທີ່ຕ້ອງຄໍານຶງເຖິງຜູ້ຖືກເຄາະຮ້າຍ ຈຶ່ງມີຄວາມສໍາຄັນ?**

ຂໍ້ມູນການດໍາເນີນຄະດີຄ້າມະນຸດ ທີ່ໄດ້ນໍາສະເໜີສະເພາະຫ່າງ 5-3 ປີ ໄດ້ສະແດງໃຫ້ເຫັນເຖິງ ເວລາທີ່ໃຊ້ໃນການດໍາເນີນຄະດີ ຫຼາຍປານໃດ ນັບແຕ່ບົດລາຍງານຂອງເຈົ້າໜ້າທີ່ຕໍາຫຼວດ ຈົນເຖິງການສະຫຼຸບຄະດີໃນສານ, ມີຄະດີຄ້າມະນຸດທີ່ຍັງຄ້າງໃນສານ ແລະ ຄະດີຄ້າມະນຸດຈໍານວນຫຼາຍ ທີ່ກໍາລັງໄດ້ຮັບການອຸທອນຕໍ່ສານຂັ້ນສູງ ຫຼື ບໍ່.

ໄລຍະເວລາທີ່ຈະໃຊ້ຂອງຄະດີ ແລະ ຄວາມເປັນໄປໄດ້ທີ່ຄໍາຕັດສິນຈະໄດ້ຮັບການອຸທອນຕໍ່ສານຂັ້ນສູງ ເປັນປັດໄຈສໍາຄັນ ທີ່ຜູ້ຖືກເຄາະຮ້າຍຈະພິຈາລະນາ ເພື່ອເປັນຂໍ້ມູນປະກອບການຕັດສິນໃຈ ວ່າຈະເປັນພະຍານໃນຄະດີຄ້າມະນຸດ ຫຼື ບໍ່.

ຂໍ້ມູນຕົວຊີ້ວັດຜົນສໍາເລັດທີ່ສໍາຄັນ ສະແດງໃຫ້ເຫັນເຖິງການຈັດຕັ້ງປະຕິບັດພັນທະຕ່າງໆ ທີ່ກໍານົດໃນມາດຕາ 12 ແລະ 16 ຂອງສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ



# ຕົວຊີ້ວັດທີ 6-9

- 6 ຜົນໄດ້ຮັບຂອງຄະດີທີ່ມີການຕັດສິນລົງໂທດ ຫຼື ການພົ້ນໂທດ
- 7 ຜົນໄດ້ຮັບທີ່ຝ່າຍຈຳເລີຍຖືກຕັດສິນໂທດ
- 8 ຜົນໄດ້ຮັບ ກ່ຽວກັບຄ່າຊົດເຊີຍ/ການໃຊ້ຄືນ/ຄ່າເສຍຫາຍ
- 9 ຄ່າຊົດເຊີຍ/ການໃຊ້ຄືນ/ຄ່າເສຍຫາຍ ທີ່ຜູ້ຖືກເຄາະຮ້າຍໄດ້ຮັບ

## ຫົວຂໍ້: ຜົນໄດ້ຮັບ ສຳລັບ ຜູ້ຖືກເຄາະຮ້າຍ

**ເປັນຫຍັງວິທີການທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ຈຶ່ງມີຄວາມສຳຄັນ?**

ຜົນຂໍ້ມູນຕົວຊີ້ວັດການຄ້າມະນຸດ ໄດ້ສະແດງການບັນທຶກຈຳນວນຄະດີທີ່ໄດ້ຖືກຕັດສິນໂທດ ຫຼື ພົ້ນໂທດ ແລະ ມີຈຳນວນຄະດີທີ່ໄດ້ຮັບຄ່າຊົດເຊີຍ/ການໃຊ້ຄືນ/ຄ່າເສຍຫາຍ ແລະ ໃນຄະດີເຫຼົ່ານີ້ ຜູ້ຖືກເຄາະຮ້າຍໄດ້ຮັບຄ່າຊົດເຊີຍທັງຈາກກອງທຶນຊົດເຊີຍແຫ່ງຊາດ ຫຼື ການໃຊ້ຄືນ/ຄ່າເສຍຫາຍ ຈາກຜູ້ຄ້າມະນຸດ.

ຄວາມເປັນໄປໄດ້ ຂອງການດຳເນີນຄະດີຄ້າມະນຸດທີ່ປະສົບຜົນສຳເລັດ ແລະ ສານມີຄຳສັ່ງໃຫ້ຮຽກຮ້ອງຄ່າຊົດເຊີຍ, ການໃຊ້ຄືນ ແລະ ຄ່າເສຍຫາຍ ເປັນປະຈຳ ຫຼື ບໍ່ ແມ່ນປັດໄຈທີ່ສຳຄັນ ທີ່ຜູ້ຖືກເຄາະຮ້າຍຈະພິຈາລະນາເປັນຂໍ້ມູນປະກອບ ໃນການຕັດສິນໃຈວ່າ ຈະເປັນພະຍານໃນຄະດີຄ້າມະນຸດ ຫຼື ບໍ່.

ຂໍ້ມູນຕົວຊີ້ວັດຜົນສຳເລັດທີ່ສຳຄັນ ສະແດງໃຫ້ເຫັນເຖິງການຈັດຕັ້ງປະຕິບັດພັນທະຕ່າງໆ ທີ່ກຳນົດໃນມາດຕາ 14 ແລະ 16 ຂອງສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ



# ຕົວຊີ້ວັດທີ 10-12




## ຫົວຂໍ້: ການໃຫ້ການສະໜັບສະໜູນແກ່ຜູ້ຖືກເຄາະຮ້າຍ

**ເປັນຫຍັງວິທີການທີ່ຕ້ອງຄໍານຶງເຖິງຜູ້ຖືກເຄາະຮ້າຍ ຈຶ່ງມີຄວາມສໍາຄັນ?**

ຂໍ້ມູນຕົວຊີ້ວັດຄະດີຄ້າມະນຸດເຫຼົ່ານີ້ ໄດ້ສະແດງໃຫ້ເຫັນວ່າມີຜູ້ຖືກເຄາະຮ້າຍຈາກຄະດີຄ້າມະນຸດທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ທີ່ເປັນສິດຂອງເຂົາເຈົ້າ ຫຼາຍເທົ່າໃດ (ນີ້ອາດເກີດຂຶ້ນໃນຂັ້ນຕອນທີ່ແຕກຕ່າງກັນ ໃນຂະບວນການຍຸຕິທໍາທາງອາຍາ) ວ່າ ຜູ້ຖືກເຄາະຮ້າຍສາມາດບັນທຶກຄໍາໃຫ້ການທີ່ເປັນພະຍານຂອງເຂົາເຈົ້າລ່ວງໜ້າໄດ້ ສໍາລັບການພິຈາລະນາຄະດີ ຫຼື ບໍ່ ແລະ ມີຂະບວນການທີ່ຊັດເຈນໃນການຮ້ອງຟ້ອງ ກ່ຽວກັບວິທີການປະຕິບັດຕໍ່ຜູ້ຖືກເຄາະຮ້າຍ ໃນຂັ້ນຕອນໃດໆຂອງຂະບວນການຄຸ້ມຄອງຄະດີຄ້າມະນຸດ ຫຼື ບໍ່.

ແຕ່ລະຊຸດຂໍ້ມູນເຫຼົ່ານີ້ ແມ່ນມີຄວາມສໍາຄັນ ເພື່ອໃຫ້ຜູ້ຖືກເຄາະຮ້າຍມີຂໍ້ມູນປະກອບການຕັດສິນໃຈວ່າ ຈະເປັນພະຍານໃນຄະດີຄ້າມະນຸດ ຫຼື ບໍ່. ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ຄວາມສາມາດຂອງພະຍານໃນການໃຫ້ຄໍາໃຫ້ການທີ່ບັນທຶກໄວ້ລ່ວງໜ້າ ເປັນວິທີການຫຼຸດຜ່ອນຄວາມບອບຊໍ້າທາງດ້ານຈິດໃຈ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ປະເຊີນເລື້ອຍໆ. ການໃຫ້ຄໍາແນະນໍາແກ່ຜູ້ຖືກເຄາະຮ້າຍ ກ່ຽວກັບກົນໄກຈັດການຄໍາຮ້ອງຟ້ອງໃນທີ່ສາທາລະນະ ໄດ້ສະແດງໃຫ້ເຫັນວ່າ: ຄວນຮັກສາການປະຕິບັດທີ່ເປັນມາດຕະຖານ ຖ້າເຂົາເຈົ້າຕັດສິນໃຈຈະເປັນພະຍານໃນຄະດີຄ້າມະນຸດ.

ຂໍ້ມູນເພີ່ມເຕີມ ກ່ຽວກັບວິທີການຈັດຕັ້ງປະຕິບັດຕົວຊີ້ວັດເຫຼົ່ານີ້ ທີ່ສຸມໃສ່ການສະໜັບສະໜູນໃຫ້ແກ່ຜູ້ຖືກເຄາະຮ້າຍ ສາມາດ ຄົ້ນຫາໄດ້ໃນຄູ່ມືການດໍາເນີນຄະດີຄ້າມະນຸດຢູ່ສານ ທີ່ຕ້ອງຄໍານຶງເຖິງຜູ້ຖືກເຄາະຮ້າຍ.

ຂໍ້ມູນຕົວຊີ້ວັດຜົນສໍາເລັດທີ່ສໍາຄັນສະແດງໃຫ້ເຫັນເຖິງການຈັດຕັ້ງປະຕິບັດພັນທະຕ່າງໆທີ່ກໍານົດໃນມາດຕາ 11 ແລະ 14 ຂອງສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ

# ຕົວຊີ້ວັດທີ 13-16

13 ຂໍ້ມູນ ກ່ຽວກັບປະເພດຂອງການຄ້າມະນຸດ

14 ຂໍ້ມູນແຍກຕາມເພດ

15 ຂໍ້ມູນແຍກຕາມອາຍຸ

16 ຂໍ້ມູນແຍກຕາມຄວາມພິການ

## ຫົວຂໍ້: ຮູບແບບການຄ້າມະນຸດ ແລະ ຂໍ້ມູນແຍກປະເພດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

**ເປັນຫຍັງວິທີການທີ່ຕ້ອງຄໍານຶງເຖິງຜູ້ຖືກເຄາະຮ້າຍ ຈຶ່ງມີຄວາມສໍາຄັນ?**

ການເກັບກໍາຂໍ້ມູນແຍກຕາມເພດ, ອາຍຸ ແລະ ຄວາມພິການ ແມ່ນມີຄວາມສໍາຄັນໃນການທໍາຄວາມເຂົ້າໃຈວ່າ ຜູ້ຖືກເຄາະຮ້າຍແມ່ນໃຜ ແລະ ຕ້ອງການການສະໜັບສະໜູນປະເພດໃດ.

ການນໍາໃຊ້ ແບບສອບຖາມ ກ່ຽວກັບຊຸດຄໍາຖາມການປະຕິບັດງານຂອງກຸ່ມວໍຊິງຕັນ ຈະເປັນບ່ອນອີງ ໃຫ້ແກ່ສານ, ຂະແໜງການຂອງລັດ ແລະ ອົງການຈັດຕັ້ງທາງສັງຄົມ ຮັບຮູ້ວ່າ ຄົນພິການອາດຕ້ອງການການບໍລິການສະເພາະໃດໜຶ່ງ.

ຜູ້ລາຍງານພິເສດຂອງອົງການສະຫະປະຊາຊາດ ກ່ຽວກັບການຄ້າມະນຸດ ໄດ້ຍົກໃຫ້ເຫັນຄວາມສໍາຄັນຂອງການເກັບກໍາຂໍ້ມູນສະຖານະຄວາມພິການທີ່ໄດ້ມີຄໍາເຫັນຕໍ່ກອງປະຊຸມຄະນະກໍາມະການຂອງສະຫະປະຊາຊາດ ວ່າດ້ວຍສິດທິຂອງຄົນພິການ ຄັ້ງທີ 24:

ຄົນພິການ ແລະ ການຄ້າມະນຸດ ແມ່ນຂົງເຂດທີ່ບໍ່ຄ່ອຍໄດ້ຮັບຄວາມສົນໃຈ ໃນກົດໝາຍລະຫວ່າງປະເທດ, ນະໂຍບາຍ ແລະ ການປະຕິບັດ ກ່ຽວກັບການຄ້າມະນຸດ. ຊ່ອງຫວ່າງນີ້ ຄວນໄດ້ຮັບການແກ້ໄຂ ເປັນບັນຫາເລັ່ງດ່ວນ. ມີຂໍ້ມູນແຍກຕາມເພດ, ອາຍຸ ແລະ ຄວາມພິການ ທີ່ຈໍາກັດ ທີ່ກ່ຽວກັບປະສົບການຂອງຄົນພິການໃນການຄ້າມະນຸດ ຫຼື ຮູບແບບການສະແຫວງຫາຜົນປະໂຫຍດທີ່ໄດ້ແຜ່ຫຼາຍ. ສິ່ງນີ້ ມີສ່ວນເຮັດໃຫ້ເກີດມີຄວາມບົກຜ່ອງທາງດ້ານການເບິ່ງເຫັນ, ຂາດຄວາມຮູ້ ແລະ ຂາດການປະຕິບັດທີ່ດີ.

ຊຸດຂໍ້ມູນຈາກຊຸດຄໍາຖາມການປະຕິບັດງານຂອງກຸ່ມວໍຊິງຕັນ ທີ່ຄວນໄດ້ຮັບການພິຈາລະນານໍາໃຊ້ ເພື່ອລະບຸຕົວຕົນຂອງຜູ້ຖືກເຄາະຮ້າຍ ແລະ ໄດ້ຮັບການນໍາໃຊ້ໃນທົ່ວໂລກ ໃນການສໍາຫຼວດພົນລະເມືອງ ແລະ ວຽກເກັບກໍາຂໍ້ມູນຂອງສູນສະຖິຕິອື່ນໆ :

- ທ່ານມີຄວາມຫຍຸ້ງຍາກໃນການເບິ່ງເຫັນ ຫຼື ບໍ່?
- ທ່ານມີຄວາມຫຍຸ້ງຍາກໃນການໄດ້ຍິນ ຫຼື ບໍ່?
- ທ່ານມີຄວາມຫຍຸ້ງຍາກໃນການຍ່າງ ຫຼື ເຄື່ອນໄຫວໄປມາ ຫຼື ບໍ່?
- ທ່ານມີຄວາມຫຍຸ້ງຍາກໃນການເຂົ້າໃຈ ຫຼື ມີສະມາທິ ຫຼື ບໍ່?
- ທ່ານມີຄວາມຫຍຸ້ງຍາກ ທີ່ຄົນອື່ນຈະເຂົ້າໃຈທ່ານ ຫຼື ບໍ່?

ຂໍ້ມູນເພີ່ມເຕີມ ກ່ຽວກັບວິທີການຈັດຕັ້ງປະຕິບັດຕົວຊີ້ວັດເຫຼົ່ານີ້ ທີ່ເນັ້ນໃສ່ການສະໜັບສະໜູນໃຫ້ແກ່ຜູ້ຖືກເຄາະຮ້າຍ ສາມາດຄົ້ນຫາໄດ້ໃນຄູ່ມືການດໍາເນີນຄະດີຄ້າມະນຸດຢູ່ສານ ທີ່ຕ້ອງຄໍານຶງເຖິງຜູ້ຖືກເຄາະຮ້າຍ.

ຂໍ້ມູນຕົວຊີ້ວັດຜົນສໍາເລັດທີ່ສໍາຄັນ ສະແດງໃຫ້ເຫັນເຖິງການຈັດຕັ້ງປະຕິບັດພັນທະຕ່າງໆ ທີ່ກໍານົດໃນມາດຕາ 5, 12, 14 ແລະ 16 ຂອງສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ



# ຕົວຊີ້ວັດທີ 17-22




ຫົວຂໍ້: ຄວາມໂປ່ງໃສຂໍ້ມູນການຄ້າມະນຸດ ເພື່ອປຸກຈິດສຳນຶກຂອງຄູ່ຮ່ວມງານມະຫາຊົນ, ລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ ໃນການຕ້ານການຄ້າມະນຸດ

**ເປັນຫຍັງວິທີການທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ຈຶ່ງມີຄວາມສຳຄັນ?**

ຂໍ້ມູນຕົວຊີ້ວັດການຄ້າມະນຸດ ແມ່ນມີຄວາມສຳຄັນ ເນື່ອງຈາກສົນທິສັນຍາ ACTIP ແມ່ນສົນທິສັນຍາພາກພື້ນ ທີ່ຮຽກຮ້ອງໃຫ້ມີການແລກປ່ຽນ ຂໍ້ມູນການຄ້າມະນຸດທີ່ສຳຄັນ ເພື່ອຮັບປະກັນວ່າ ການບັນລຸຈຸດປະສົງຂອງສົນທິສັນຍາ. ຄາດວ່າການເຜີຍແຜ່ຂໍ້ມູນທ່າອ່ຽງ 3-5 ປີ ໃຫ້ທັນການ ໃນທ້າຍປີຂອງແຕ່ລະປີ ຈະສົ່ງຜົນໃຫ້ມີຂໍ້ມູນຂ່າວສານທີ່ດີຂຶ້ນ ໃຫ້ແກ່ຫຼາຍຮ້ອຍຄູ່ຮ່ວມງານພາກລັດ, ອົງການຈັດຕັ້ງທາງສັງຄົມ ແລະ ສານ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດສົນທິສັນຍາ ACTIP.

ຂໍ້ມູນເພີ່ມເຕີມ ກ່ຽວກັບວິທີການຈັດຕັ້ງປະຕິບັດຕົວຊີ້ວັດເຫຼົ່ານີ້ ທີ່ເນັ້ນໃສ່ການສະໜັບສະໜູນໃຫ້ແກ່ຜູ້ຖືກເຄາະຮ້າຍ ສາມາດຄົ້ນຫາໄດ້ໃນຄູ່ມືການດຳເນີນຄະດີຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ.

ຂໍ້ມູນຕົວຊີ້ວັດຜົນສຳເລັດທີ່ສຳຄັນ ສະແດງໃຫ້ເຫັນເຖິງການຈັດຕັ້ງປະຕິບັດພັນທະຕ່າງໆ ທີ່ກຳນົດໃນມາດຕາ 8, 11-16 ຂອງສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ

# ຄຳຂອບໃຈ

ບົດລາຍງານສະບັບນີ້ ແມ່ນຜົນການປຶກສາຫາລື ແລະ ການພົດຕໍ່ພົວພັນຜ່ານທາງອີເມລ໌ຫຼາຍຄັ້ງ ກັບຄະນະກຳມະການປະສານງານແຫ່ງຊາດ ໃນປະເທດ ກຳປູເຈຍ, ສປປ ລາວ, ຟີລິປິນ, ໄທ ແລະ ສສ ຫວຽດນາມ. ສ່ວນປະເທດສະມາຊິກອາຊຽນອື່ນໆ ແມ່ນໄດ້ຮັບການແຈ້ງ ໂດຍຜ່ານຜູ້ຕາງໜ້າຂອງເຂົາເຈົ້າ ຕໍ່ກອງປະຊຸມເຈົ້າໜ້າທີ່ອາວຸໂສ ກ່ຽວກັບອາຊະຍາກຳຂ້າມຊາດ (SOMTC).

ແຜນງານ ASEAN-ACT ຈະສືບຕໍ່ເຮັດວຽກຮ່ວມກັບອາຊຽນ ແລະ ປະເທດສະມາຊິກອາຊຽນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ການຈັດຕັ້ງປະຕິບັດພັນທະຕ່າງໆຂອງສົນທິສັນຍາ ACTIP ແລະ ປັບປຸງຄຸນນະພາບ ແລະ ຄວາມໂປ່ງໃສ ຂອງຂໍ້ມູນການຄ້າມະນຸດ.


ກຳປູເຈຍ


ອິນໂດເນເຊຍ


ສປປ ລາວ


ຟີລິປິນ


ໄທ


ສສ ຫວຽດນາມ

